# ການນໍາສະເໜີແນວພັນຖົ່ວເຫຼືອງ ສໍາລັບປູກໃນ ສປປ ລາວ

Rice Science for a Better World
INTERNATIONAL RICE RESEARCH INSTITUTE

ແຜ່ນໂຄສະນາເຕັກໂນໂລຢີສໍາລັບຊາວກະສິກອນ

IRRI



ຖົ່ວເຫຼືອງເປັນພືດຕະກຸນຖົ່ວສະນິດໜຶ່ງທີ່ສາມາດປູກໝູນວຽນກັບພືດໄຮ່ ແລະ ສາມາດປັບປຸງດິນໄດ້ອີກດ້ວຍ. ຖົ່ວເຫຼືອງສາມາດຂາຍເປັນອາການຄົນ ຫຼື ອາຫານສັດ. ຝັກອ່ອນຂອງມັນສາມາດຕົ້ມ ແລະ ກິນເປັນອາຫານຫ່ວາງທີ່ໃຫ້ທາດບໍາລຸງລ້ຽງສູງ.

**ແນວພັນຖົ່ວເຫຼືອງ**

ແນວພັນຖົ່ງເຫຼືອງແມ່ນມີຄວາມແຕກຕ່າງກັນທາງດ້ານປັດໃຈຕ່າງໆຄື: 1) ອາຍຸໃນການເກັບກ່ຽວ [ອາຍຸດໍ, ອາຍຸກາງ ແລະ ອາຍຸປີ] ແລະ 2) ລັກສະນະຂອງການອອກດອກ. ແນວພັນທີ່ລໍາຕົ້ນບໍ່ປົ່ງຍອດອອກແມ່ນອອກດອກພ້ອມກັນໝົດ. ດອກທໍາອິດຈະເລີ້ມຈາກຍອດຂອງມັນ. ແນວພັນທີ່ລໍາຕົ້ນປົ່ງຍອດອອກແມ່ນອອກດອກບໍ່ພ້ອມກັນ ແລະ ການອອກດອກແມ່ນເລີ້ມຈາກລຸ່ມຂອງລໍາຕົ້ນ. ຊາວກະສິກອນຕ້ອງໄດ້ເລືອກເຟັ້ນປູກແນວພັນທີ່ແທດເໝາະກັບພື້ນທີ່ຂອງເຂົາເຈົ້າ. ຖົ່ວເຫຼືອງແມ່ນເປັນພືດທີ່ຮູ້ສຶກຕໍ່ແສງ (ການອອກດອກແມ່ນຂຶ້ນກັບຄວາມຍາວຂອງກາງວັນ) ດັ່ງນັ້ນອາຍຸຂອງການເກັບກ່ຽວຖົ່ວເຫຼືອງແມ່ນຂຶ້ນກັບຊ່ວງເວລາທີ່ປູກຖົ່ວເຫຼືອງໃນແຕ່ລະປີ.




**ເວລາໃດຄວນປູກຖົ່ວເຫຼືອງ**: ຖົ່ວເຫຼືອງສາມາດປູກໄດ້ສອງຄັ້ງ:

1) ປູກເປັນພືດຫຼັກ. ຄວນປູກໃນຊ່ວງຕົ້ນເດືອນຫາກາງເດືອນກໍລະກົດ. ປູກຖົ່ວເຫຼືອງພາຍຫຼັງເກັບກ່ຽວສາລີ ແລະ ໝາກງາດໍ. ອາຍຸການເກັບກ່ຽວຖົ່ວເຫຼືອງແມ່ນຂຶ້ນກັບແຕ່ລະແນວພັນ.
2) ປູກໃນຊ່ວງລະດູແລ້ງໃສ່ນາ. ການປູກຖົ່ງເຫຼືອງໃນຊ່ວງນີ້ຕ້ອງໃຫ້ມີນໍ້າສໍາລັບຖົ່ວເຫຼືອງ ແລະ ພາຍຫຼັງເກັບກ່ຽວເຂົ້າແລ້ວຕ້ອງປູກຖົ່ວເຫຼືອງໃສ່ໃຫ້ໄວເທົ່າທີ່ເປັນໄປໄດ້.

| ເດືອນ | 1 | 2 | 3 | 4 | 5 | 6 | 7l | 8 | 9 | 10 | 11 | 12 |
|---|---|---|---|---|---|---|---|---|---|---|---|---|
| ເປັນພືດຫຼັກ | | | | | | | | | | | | |
| ປູກຖົ່ວເຫຼືອງຫຼັງຈາກເກັບກ່ຽວສາລີ ແລະ ໝາກງາດໍ | | | | | | | | | | | | |
| ປູກຊ່ວງລະດູແລ້ງ | | | | | | | | | | | | |

**ບາງບັນຫາທີ່ອາດຈະພົບເຫັນໃນການປູກຖົ່ວເຫຼືອງ:**

1. ໜູ ອາດເປັນບັນຫາຕະຫຼອດຊ່ວງປູກຈົນກ່ວາເກັບກ່ຽວ.
2. ແມງທືວແດງ (ແມງຜັກທົມ) ແມ່ນເປັນບັນໃນຊ່ວງລະດູຝົນ. ພວກມັນກິນດອກ ແລະ ໃບອ່ອນຂອງຖົ່ວເຫຼືອງ.
3. ບົ້ງຮໍາໃບຈະຮໍາໃບຖົ່ວເຫຼືອງ ແລະ ວາງໄຂ່ໃສ່. ບັນຫາແມ່ນເກີດຂຶ້ນໃນຊ່ວງລະດູແລ້ງ.
4. ແມງໝີ່ ຈະເຈາະລໍາຕົ້ນຂອງຖົ່ວເຫຼືອງ ແລະ ເຮັດໃຫ້ລໍາຕົ້ນຖົ່ວເຫຼືອງບໍ່ແຂງແຮງ.



ແມງທືວແດງ

ຂຽນ ແລະ ຂໍ້ມູນປະກອບໂດຍ: B Linquist
ແປໂດຍ: ຖານີ ແກ້ວວົງວິຈິດ

ສໍາລັບຂໍ້ມູນເພີ້ມເຕີມ: ເບິ່ງໃນເວັບ www.knowledgebank.irri.org

ສູນຄົ້ນຄ້ວາກະສິກໍາ ແລະ ປ່າໄມ້ພາກເໜືອ